ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອຸດົມໄຊ

ພະແນກ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ..42../ພຕສ

ອຸດົມໄຊ, ວັນທີ.03.ກຸມພາ 2025

# ແຈ້ງການ

**ເຖິງ**: ຜູ້ປະກອບການ ດຳເນີນທຸລະກິດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຢູ່ພາຍໃນແຂວງ.

**ເລື່ອງ**: ອອກ ຫຼື ຕໍ່ໃບອະນຸຍາດ ດຳເນີນທຸລະກິດ ດ້ານເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ (ICT) ປະຈຳປີ 2025.

- **ອີງຕາມ** ກົດໝາຍ ວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 7 ພະຈິກ 2016.
- **ອີງຕາມ** ຂໍ້ຕົກລົງຂອງທ່ານເຈົ້າແຂວງ ແຂວງອຸດົມໄຊ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022;
- **ອີງຕາມ** ຂໍ້ຕົກລົງຂອງທ່ານເຈົ້າແຂວງ ແຂວງອຸດົມໄຊ ວ່າດ້ວຍການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ຢູ່ແຂວງອຸດົມໄຊ ສະບັບເລກທີ 1282/ອຊ, ລົງວັນທີ 12 ກັນຍາ 2024.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຂໍຖືເປັນກຽດແຈ້ງມາຍັງ ບັນດາທ່ານຜູ້ປະກອບການດຳເນີນທຸລະກິດ ດ້ານເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ (ICT) ຢູ່ພາຍໃນແຂວງອຸດົມໄຊ ປະເພດບໍລິການຕ່າງໆ ດັ່ງນີ້: ຈຳໜ່າຍອຸປະກອນໄອຊີທີ (ຄອມພິວເຕີ, ໂທລະສັບ), ຕິດຕັ້ງ ແລະ ສ້ອມແປງໄອຊີທີ ຂະໜາດນ້ອຍ (ຄອມພິວເຕີ, ໂທລະສັບ), ຕິດຕັ້ງ ແລະ ສ້ອມແປງລະບົບເຄືອຂ່າຍ (ເຄືອຂ່າຍຄອມພິວເຕີ, ກ້ອງວົງຈອນປິດ), ສ້າງ ແລະ ບໍລິການຊ່ອບແວ, ອິນເຕີເນັດກາເຟ ປະເພດ 1 ແລະ ອື່ນໆ. **ໃຫ້ມາອອກ ຫຼື ຕໍ່ໃບອະນຸຍາດ ປະຈຳປີ 2025 ນັບແຕ່ມື້ອອກແຈ້ງການເປັນຕົ້ນໄປ ຈົນເຖິງວັນທີ 14 ມີນາ 2025,** ຖ້າຫາກຜູ້ປະກອບການໃດບໍ່ເຂົ້າມາອອກ ຫຼື ຕໍ່ໃບອະນຸຍາດການດຳເນີນທຸລະກິດດັ່ງກ່າວ ຕາມວັນເວລາທີ່ກຳນົດໄວ້, ທາງພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຈະໄດ້ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ການຍື່ນເອກະສານ ເພື່ອຂໍອອກ ຫຼື ຕໍ່ໃບອະນຸຍາດ ແມ່ນສາມາດດຳເນີນການໄດ້ດ້ວຍວິທີການໃດໜຶ່ງ ດັ່ງລຸ່ມນີ້:

1. ເຂົ້າໄປພົວພັນປະກອບເອກະສານຕາມແບບພິມ ເພື່ອຍື່ນຂໍອອກ ຫຼື ຕໍ່ໃບອະນຸຍາດ ຢູ່ທີ່ຫ້ອງການຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ໃນເວລາລັດຖະການ, ສຳນັກງານຕັ້ງຢູ່ບ້ານດອນໄຊ, ເມືອງໄຊ, ແຂວງອຸດົມໄຊ. ສຳລັບບັນດາເມືອງ ແມ່ນຢູ່ຫ້ອງວ່າການເມືອງ 07 ເມືອງ. ເອກະສານອອກ ແລະ ຕໍ່ໃບອະນຸຍາດ ປະກອບມີ: ຮູບຂະໜາດ 3*4 ຈຳນວນ 02 ໃບ, ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ສຳລັບນັກທຸກລະກິດຕ່າງປະເທດ ແລະ ໃບອະນຸຍາດ ປະຈຳປີ 2024 ສຳລັບຕໍ່ໃບອະນຸຍາດ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
2. ທ່ານສາມາດຍື່ນເອກະສານ ເພື່ອຂໍອອກ ຫຼື ຕໍ່ໃບອະນຸຍາດ ຜ່ານລະບົບອອນລາຍ ໂດຍເຂົ້າໄປທີ່ ເວັບໄຊ www.db.dtc-odx.gov.la ລາຍລະອຽດໃນການນຳໃຊ້ ສາມາດອ່ານຄູ່ມືການນຳໃຊ້ໃນເວັບໄຊດັ່ງກ່າວ ຫຼື ຕິດຕໍ່ພົວພັນຫາ ເບີໂທລະສັບ: 020 5829 2409, 020 5651 8988 ໃນໂມງລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າພະແນກ

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ

ມ. ປິ່ນຄຳ ອຸ່ນລະຄອນ

ດາວໂຫຼດເອກະສານຂໍໃບອະນຸຍາດ

ພົວພັນປະສານງານ:

ທ່ານ ຈຸ່ ເຊັງ 020 5829 2409